**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

ກະຊວງສາທາລະນະສຸກ

ກົມອາຫານ ແລະ ຢາ

ເລກທີ: 0805 /ກອຢ

ທີ່ ນະຄອນຫຼວງວຽງຈັນ, ວັນທີ: 25 May 2016

# ແຈ້ງການ

**ຮຽນ: ທ່ານຫົວໜ້າ ພະແນກສາທາລະນະສຸກ ແຂວງ ແລະ ນະຄອນຫຼວງ ທົ່ວປະເທດ.**

**ເລື່ອງ: ກວດພົບຢາ Dexamethasone 0,5mg, Prednisolone 5mg ຊະນິດເມັດ ທີ່ບໍ່ຮັບປະກັນ ຄຸນນະພາບ ແລະ ມີຄວາມສ່ຽງ ຕໍ່ສຸຂະພາບ ຜູ້ຊົມໃຊ້.**

- ອີງຕາມ ກົດໝາຍຢາ ແລະ ຜະລິດຕະພັນການແພດ ເລກທີ 07/ສພຊ, ລົງວັນທີ 11 ທັນວາ 2011.
- ອີງຕາມ ຂໍ້ກຳນົດ ວ່າດ້ວຍ ການສ້າງຕັ້ງ ບໍລິສັດຂາອອກ-ຂາເຂົ້າຢາ ແລະ ຜະລິດຕະພັນການແພດ ເລກທີ 1141/ກຊສ, ລົງວັນທີ 13 ສິງຫາ 2003

**ກົມກວດກາ ອາຫານ ແລະ ຢາ ມີຄວາມຍິນດີ ແຈ້ງ ມາຍັງທ່ານຊາບວ່າ :**

ຜ່ານການລົງຕິດຕາມ, ຊຸກຍູ້, ກວດກາຢາ ແລະ ຜະລິດຕະພັນການແພດ ຂອງ ກົມກວດກາ ອາຫານ ແລະ ຢາ ແລະ ຂະແໜງອາຫານ ແລະ ຢາ ແຂວງ ຢູ່ຂັ້ນເຂດລັດ ແລະ ເອກະຊົນ ໃນສົກປີ 2016, ໄດ້ກວດພົບເຫັນຢາ ທີ່ສະຫລາກ ຫຸ້ມຫໍ່ ບໍ່ມີຂໍ້ມູນ ຊື່ໂຮງງານ ແລະ ສະຖານທີ່ຜະລິດ, ແມ່ນຢາທີ່ບໍ່ໄດ້ຂຶ້ນທະບຽນ, ບໍ່ໄດ້ຮັບອະນຸຍາດນຳເຂົ້າ, ນຳເຂົ້າ ຈາກ ແຫລ່ງທີ່ບໍ່ຖືກຕ້ອງ, ບໍ່ຮັບປະກັນຄຸນນະພາບ ແລະ ມີຄວາມສ່ຽງ ຕໍ່ສຸຂະພາບ ຜູ້ຊົມໃຊ້ ຄື:

1. Dexamethasone 0,5 mg, ຊະນິດຢາເມັດ, ບັນຈຸໃນກະປ໋ອງ 1,000 ເມັດ/ກະປ໋ອງ
2. Prednisolone 5 mg ຊະນິດຢາເມັດ, ບັນຈຸໃນກະປ໋ອງ 1,000 ເມັດ/ກະປ໋ອງ

ເພື່ອປົກປ້ອງຜູ້ບໍລິໂພກໃຫ້ໄດ້ຮັບຢາດີ, ມີຄຸນນະພາບ ແລະ ມີປະສິດ ທິຜົນ ໃນການກັນ ແລະ ປິ່ນປົວພະຍາດ, ເພື່ອແນໃສ່ ລຸດຜ່ອນ ຄວາມທຸກຍາກ ແລະ ສົ່ງເສີມ ສຸຂະພາບ ຂອງ ປະຊາຊົນ ບັນດາເຜົ່າ ໃຫ້ດີ ຂຶ້ນ ຈຶ່ງຮຽກຮ້ອງ ແລະ ຂໍ ສະເໜີມາຍັງທ່ານ ຊີ້ນຳ ຂະແໜງອາຫານແລະຢາແຂວງ ປະຕິບັດ ດັ່ງລຸ່ມນີ້:

1. ສະເໜີ ໃຫ້ອາຫານ ແລະ ຢາແຂວງສົມທົບກັບ ອາຫານ ແລະ ຢາເມືອງ ລົງກວດກາ ສະຖານທີ່ ບໍລິການ ດ້ານສຸຂະພາບໃນແຕ່ລະຂັ້ນ ( ຂັ້ນເຂດລັດ ແລະ ເອກະຊົນ ) ຖ້າພົບຢາດັ່ງກ່າວ ໃຫ້ອາຍັດໄວ້ກ່ອນ, ບັນທຶກ ແລະ ເກັບກຳຈຳນວນ, ສືບຖາມຫາແຫລ່ງທີ່ມາຂອງຢາ.
2. ພາຍຫລັງສຳເລັດແລ້ວ ສະເໜີ ອາຫານແລະຢາ ແຂວງສະຫຼຸບສົ່ງໃຫ້ກົມກວດກາອາຫານແລະຢາ ຊາບ, ເພື່ອລາຍງານ ແລະ ຂໍທິດຊີ້ນຳ ຂັ້ນເທິງ ໃນການ ແກ້ໄຂ ບັນຫາ ໃນຂັ້ນຕໍ່ໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຂໍຄວາມຮ່ວມມື ຕາມທາງຄວນດ້ວຍ

ດ້ວຍຄວາມນັບຖື

**ຫົວໜ້າກົມກວດກາອາຫານແລະຢາ**

ສະແຫວງອິງ ດວງສະຫວັນ


PREDNISOLONE
Prednisolone
Lot control no:
160493
Mfg. date:
1.4.16
1.4.20


5 to 60 mg daily.
2 to 4 times a day. Reduced to maintenance
dose after 2 to 7 days until symptoms are
control.
Storage condition: At room temperature (30°C±2)
วันละ 5-60 มิลลิกรัมตามแพทย์สั่ง
วัณโรค โรคติดเชื้อไวรัส


เดซาเมตาโซน เม็ด
ใช้เป็น Adrenocortical steroid
An anti-inflammatory Steroid with little salt
Dose : Oral 0.5 to 10 mg daily divided dose.
ขนาดรับประทาน วันละ 0.5 - 10 มิลลิกรัม
โดยแบ่งให้รับประทานตามแพทย์สั่ง


EXAMETHASONE
TABLET
Each tablet contains : Dexamethasone 0.5 mg.
Lot control no:
150978
Mfg. date:
3.9.15
3.9.19
Storage condition: At room temperature